ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 52 /ລບ
ນະຄອນຫຼວງວຽງຈັນ, ວັນທີ 21.02.2019.

# ດຳລັດ
## ວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມໜັງສືສະເໜີ ສະບັບເລກທີ 0065/ສທ, ລົງວັນທີ 18 ມັງກອນ 2019 ຂອງກະຊວງສາທາລະນະສຸກ.

## ລັດຖະບານ ອອກດຳລັດ:
## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດອັດຕາປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດຢ່າງຖືກຕ້ອງ, ເປັນເອກະພາບທົ່ວປະເທດ ແນໃສ່ເຮັດໃຫ້ການດຳເນີນທຸລະກິດຜະລິດຕະພັນຢາສູບຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ, ໃຫ້ພົນລະເມືອງມີສຸຂະພາບເຂັ້ມແຂງ, ຫຼຸດຜ່ອນການຊົມໃຊ້ຢາສູບ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແມ່ນມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ກ່ຽວກັບການຄວບຄຸມຢາສູບ.

ນຳໃຊ້ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝຕໍ່ຜູ້ລະເມີດທາງດ້ານບໍລິຫານ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນການຍຶດ, ການທຳລາຍຜະລິດຕະພັນຢາສູບ, ການໂຈະ, ການຖອນໃບອະນຸຍາດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜະລິດຕະພັນຢາສູບ** ໝາຍເຖິງຢາເສັ້ນ, ກອກຢາສຳເລັດຮູບ, ຢາຊິກາ, ຢາສູບເອເລັກໂຕຣນິກ, ຢາສູບຊິຊາ ແລະ ຢາຮູບແບບອື່ນ ທີ່ນຳໃຊ້ໃບຢາສູບເປັນວັດຖຸດິບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ;
2. **ຢາສູບອີເລັກໂຕຣນິກ (Ecigarettes ຫຼື Electronic cigarettes)** ໝາຍເຖິງຜະລິດຕະພັນຢາສູບ ທີ່ບັນຈຸສານລະເຫີຍນິໂກຕິນ, ສູບດົມໄດ້ໂດຍໃຊ້ພະລັງງານໄຟຟ້າ;
3. **ຢາສູບຊິຊາ (Shisha)** ໝາຍເຖິງຜະລິດຕະພັນຢາສູບ ທີ່ໃຊ້ລະບົບພະລັງງານໄຟຟ້າເພື່ອສູບ ແລະ ສູດດົມເອົາສານລະເຫີຍນິໂກຕິນ ທີ່ປະສົມໃນນ້ຳຜ່ານທໍ່ເຂົ້າປາກ;
4. **ຜະລິດຕະພັນຢາສູບນອກລະບົບ** ໝາຍເຖິງຜະລິດຕະພັນຢາສູບ ທີ່ລັດບໍ່ເກືອດຫ້າມ ແຕ່ມີການຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ມາດຕາ 4 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ ຢູ່ ສປປ ລາວ.

## ໝວດທີ 2
### ອັດຕາການປັບໃໝ ແລະ ນຳໃຊ້ມາດຕະການອື່ນ

ມາດຕາ 5 ການລະເມີດ

ພຶດຕິກຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ມີດັ່ງນີ້:

1. ການບໍ່ພິມສະຫຼາກ ແລະ ຄຳເຕືອນສຸຂະພາບ ໃສ່ວັດຖຸຫຸ້ມຫໍ່;
2. ການໂຄສະນາຜະລິດຕະພັນຢາສູບ;
3. ການບໍ່ຕິດປ້າຍໃນສະຖານທີ່ຫ້າມສູບຢາ;
4. ການສູບຢາໃນສະຖານທີ່ຫ້າມສູບຢາ;
5. ການຂາຍ ຫຼື ຈຳໜ່າຍຜະລິດຕະພັນຢາສູບ ໃນສະຖານທີ່ເກືອດຫ້າມ;
6. ການຂາຍຢາສູບໃຫ້ເດັກ ຫຼື ໃຫ້ເດັກຊື້ ຫຼື ຂາຍຜະລິດຕະພັນຢາສູບ;
7. ການຂາຍຜະລິດຕະພັນຢາສູບດ້ວຍເຄື່ອງຈັກອັດຕະໂນມັດ;
8. ການຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ຂາຍຢາຊອງ ທີ່ບັນຈຸຕ່ຳກວ່າຊາວກອກ, ຢາຊອງ ຫຼື ຢາກະປ໋ອງ ເປັນກອກ ແລະ ຜະລິດຕະພັນຢາສູບນອກລະບົບທຸກຮູບການ.

ມາດຕາ 6 ການບໍ່ພິມສະຫຼາກ ແລະ ຄຳເຕືອນສຸຂະພາບ ໃສ່ວັດຖຸຫຸ້ມຫໍ່

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຜະລິດ ຫຼື ນຳເຂົ້າຜະລິດຕະພັນຢາສູບ ໃນ ສປປ ລາວ ຫາກບໍ່ພິມສະຫຼາກ ແລະຄຳເຕືອນສຸຂະພາບ ເປັນຮູບພາບ ແລະ ຂໍ້ຄວາມຕົວໜັງສື ໃສ່ວັດຖຸຫຸ້ມຫໍ່ ຕາມການກຳນົດ ຂອງກະຊວງສາທາລະນະສຸກ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສິບລ້ານກີບ;
2. ຄັ້ງທີສອງ ຈະຖືກປັບໃໝ ຊາວລ້ານກີບ;

ພນ/

3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະຫ້າສິບລ້ານກີບ ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

ສຳລັບຜະລິດຕະພັນຢາສູບທີ່ບໍ່ພິມສະຫຼາກ ແລະ ຄຳເຕືອນສຸຂະພາບ ຈະຖືກຍຶດ ແລະ ທຳລາຍຖິ້ມ.

**ມາດຕາ 7 ການໂຄສະນາຜະລິດຕະພັນຢາສູບ**

ບຸກຄົນ ຫຼື ນິຕິບຸກຄົນ ຫາກລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການໂຄສະນາຜະລິດຕະພັນຢາສູບຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ຊາວລ້ານກີບ;
2. ຄັ້ງທີສອງ ຈະຖືກປັບໃໝ ສີ່ສິບລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະແປດສິບລ້ານກີບ ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 8 ການບໍ່ຕິດປ້າຍໃນສະຖານທີ່ຫ້າມສູບຢາ**

ເຈົ້າຂອງສະຖານທີ່ ຫຼື ຜູ້ດຳເນີນທຸລະກິດ ຫາກບໍ່ຕິດປ້າຍໃນສະຖານທີ່ຫ້າມສູບຢາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະສອງລ້ານກີບ.

**ມາດຕາ 9 ການສູບຢາໃນສະຖານທີ່ຫ້າມສູບຢາ**

ບຸກຄົນຫາກສູບຢາ ລວມທັງຢາສູບອີເລັກໂຕຣນິກ ແລະ ຢາສູບຊີຊາ ໃນສະຖານທີ່ຫ້າມສູບຢາ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ສອງແສນກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະສີ່ແສນກີບ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງສະຖານທີ່ ຫາກເມີນເສີຍ ຫຼື ປະປ່ອຍໃຫ້ມີການສູບຢາ ລວມທັງຢາສູບອີເລັກໂຕຣນິກ ແລະ ຢາສູບຊີຊາ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະຫ້າລ້ານກີບ.

**ມາດຕາ 10 ການຂາຍ ຫຼື ຈຳໜ່າຍຜະລິດຕະພັນຢາສູບ ໃນສະຖານທີ່ເກືອດຫ້າມ**

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍ ຫຼື ຈຳໜ່າຍຜະລິດຕະພັນຢາສູບ ໃນສະຖານທີ່ເກືອດຫ້າມ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ຫ້າແສນກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະໜຶ່ງລ້ານກີບ.

ຄປ/

ມາດຕາ 11 ການຂາຍຢາສູບໃຫ້ເດັກ ຫຼື ໃຫ້ເດັກຊື້ ຫຼື ຂາຍຜະລິດຕະພັນຢາສູບ

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍຢາສູບໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສອງລ້ານກີບ;
2. ຄັ້ງທີສອງ ຈະຖືກປັບໃໝ ສີ່ລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະແປດລ້ານກີບ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ຊື້ ຫຼື ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະສອງລ້ານກີບ.

ມາດຕາ 12 ການຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກອັດຕະໂນມັດ

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກອັດຕະໂນມັດຈະຖືກປັບໃໝ ຫ້າລ້ານກີບ ຕໍ່ເຄື່ອງ ພ້ອມທັງຢຶດ ແລະ ທຳລາຍຖິ້ມ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກນຳເຂົ້າ, ຂາຍ ຫຼື ຈຳໜ່າຍເຄື່ອງຈັກອັດຕະໂນມັດ ຂາຍຜະລິດຕະພັນຢາສູບ ຈະຖືກປັບໃໝ ສິບລ້ານກີບ ຕໍ່ເຄື່ອງ ພ້ອມທັງຢຶດ ແລະ ທຳລາຍຖິ້ມ.

ມາດຕາ 13 ການຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ຂາຍຢາຊອງ ທີ່ບັນຈຸຕໍ່າກວ່າຊາວກອກ, ຢາຊອງ ຫຼື ຢາກະປ໋ອງ ເປັນກອກ ແລະ ຜະລິດຕະພັນຢາສູບນອກລະບົບທຸກຮູບການ

ບຸກຄົນ ຫຼື ນິຕິບຸກຄົນ ຫາກຜະລິດ, ນຳເຂົ້າ ຫຼື ຈຳໜ່າຍຢາຊອງ ທີ່ບັນຈຸຕໍ່າກວ່າຊາວກອກ ຈະຖືກປັບ ໃໝ ແລະ ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ ສິບລ້ານກີບ;
2. ຄັ້ງທີສອງ ຈະຖືກປັບໃໝ ຊາວລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະຫ້າສິບລ້ານກີບ ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກຂາຍຢາຊອງ ຫຼື ຢາກະປ໋ອງເປັນກອກ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ;
2. ຄັ້ງທີສອງ ຈະຖືກປັບໃໝ ສອງລ້ານກີບ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ ຄັ້ງລະຫ້າລ້ານກີບ.

ບຸກຄົນ ຫຼື ນິຕິບຸກຄົນ ຫາກຜະລິດ, ນຳເຂົ້າ ຫຼື ຈຳໜ່າຍຢາສູບນອກລະບົບທຸກຮູບການ ຈະຖືກປັບໃໝ ແລະ ມາດຕະການອື່ນ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝໜຶ່ງເທົ່າ ຂອງມູນຄ່າສິນຄ້າທັງໝົດ;
2. ຄັ້ງທີສອງ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າສິນຄ້າທັງໝົດ;
3. ຄັ້ງທີສາມ ຈະຖືກປັບໃໝສາມເທົ່າ ຂອງມູນຄ່າສິນຄ້າທັງໝົດ ພ້ອມທັງສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

ສຳລັບຜະລິດຕະພັນຢາສູບ ທີ່ຜະລິດ, ນຳເຂົ້າ, ຈຳໜ່າຍ ຫຼື ຂາຍຢາຊອງ ທີ່ບັນຈຸຕ່ຳກວ່າຊາວກອກ, ຢາຊອງ ຫຼື ຢາກະປ໋ອງເປັນກອກ ແລະ ຜະລິດຕະພັນຢາສູບນອກລະບົບທຸກຮູບການ ຈະຖືກຍຶດ ແລະ ທຳລາຍຖິ້ມ.

## ໝວດທີ 3
## ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ

**ມາດຕາ 14 ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ**

ຂະແໜງການສາທາລະນະສຸກ, ຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ ແລະ ເຜີຍແຜ່ ພາຍໃນເວລາ ເກົ້າສິບວັນ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ເພື່ອໃຫ້ສັງຄົມມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ຂະແໜງການສາທາລະນະສຸກ ຮັບຜິດຊອບຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕາມທີ່ກຳນົດໄວ້ ໃນມາດຕາ 6 ແລະ 7 ຂອງດຳລັດສະບັບນີ້.

ຂະແໜງການປ້ອງກັນຄວາມສະຫງົບ ຮັບຜິດຊອບຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນຕາມທີ່ກຳນົດໄວ້ ໃນມາດຕາ 8, 9, 10 ແລະ 11 ຂອງດຳລັດສະບັບນີ້.

ຂະແໜງການອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕາມທີ່ກຳນົດໄວ້ ໃນມາດຕາ 12 ແລະ 13 ຂອງດຳລັດສະບັບນີ້.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງຂະແໜງການສາທາລະນະສຸກ**

ຂະແໜງການສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
2. ກຳນົດແບບພິມກ່ຽວກັບການປັບໃໝ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
3. ປັບໃໝຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຍຶດ ແລະ ທຳລາຍ ຜະລິດຕະພັນຢາສູບ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
5. ສະເໜີຂະແໜງການທີ່ກ່ຽວຂ້ອງ ຍົກເລີກການດຳເນີນທຸລະກິດ;
6. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
7. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດກ່ຽວກັບການປັບໃໝ ແລະ ມາດຕະການອື່ນ ຕໍ່ການລະເມີດໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມພາລະບົດບາດຂອງຕົນ;

2. ປັບໃໝຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຢຶດ ແລະ ທຳລາຍ ຜະລິດຕະພັນຢາສູບທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
5. ສະເໜີຂະແໜງການທີ່ກ່ຽວຂ້ອງ ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ;
6. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດ ກ່ຽວກັບການປັບໃໝ ແລະ ມາດຕະການອື່ນ ຕໍ່ການລະເມີດໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 17 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມພາລະບົດບາດຂອງຕົນ;
2. ປັບໃໝຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຢຶດ ແລະ ທຳລາຍ ຜະລິດຕະພັນຢາສູບທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;
5. ສະເໜີຂະແໜງການກ່ຽວຂ້ອງ ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ;
6. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດກ່ຽວກັບການປັບໃໝ ແລະ ມາດຕະການອື່ນ ຕໍ່ການລະເມີດໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 18 ຄວາມຮັບຜິດຊອບຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການໃຫ້ຄວາມຮ່ວມມື ແລະ ປະກອບສ່ວນໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບຕາມພາລະບົດບາດຂອງຕົນ.

## ໝວດທີ 4
## ການຄຸ້ມຄອງ ແລະ ນຳໃຊ້ເງິນທີ່ໄດ້ຈາກການປັບໃໝ

### ມາດຕາ 19 ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ

ເງິນປັບໃໝ ທີ່ເກັບໄດ້ຈາກການລະເມີດ ດຳລັດສະບັບນີ້ ມອບໃຫ້ເຂົ້າຄັງເງິນແຫ່ງຊາດ ໂດຍແມ່ນຂະແໜງການ ການເງິນເປັນຜູ້ຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ເງິນປັບໃໝດັ່ງກ່າວ 70%

(ເຈັດສິບສ່ວນຮ້ອຍ) ມອບເຂົ້າງົບປະມານແຫ່ງລັດ ແລະ 30% (ສາມສິບສ່ວນຮ້ອຍ) ມອບເຂົ້າກອງທຶນຄວບຄຸມຢາສູບເພື່ອນຳໃຊ້ບໍລິຫານວຽກງານ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 20 ຂອງດຳລັດສະບັບນີ້.

**ມາດຕາ 20 ການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ທີ່ມອບເຂົ້າກອງທຶນຄວບຄຸມຢາສູບ ຕ້ອງນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານການປັບໃໝ ແລະ ມາດຕະການຕໍ່ຜູ້ລະເມີດ ຂອງພະນັກງານ ແລະ ເຈົ້າໜ້າທີ່;
2. ບໍລິຫານກ່ຽວກັບວຽກງານຄວບຄຸມຢາສູບ;
3. ຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານຄວບຄຸມຢາສູບ;
4. ວຽກງານອື່ນ ທີ່ກ່ຽວຂ້ອງກັບວຽກງານຄວບຄຸມຢາສູບ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໂດຍປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ດຳລັດສະບັບນີ້ ຕາມພາລະບົດບາດ ແລະ ໜ້າທີ່ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ກຳນົດບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ